ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
--------===ooo===--------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5.
ຖະໜົນ: ໄກສອນພົມວິຫານ, ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທລະສັບ: (+856 21)418062 – 6

ນະຄອນຫຼວງວຽງຈັນ,**ວັນທີ 13 ທັນວາ 2022**

ພິທີລົງນາມການຮ່ວມມືທາງທຸລະກິດ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ແລະ ຮ້ານຄຳພູວົງ ຜູ້ປະກອບການຮ້ານຄຳລາຍໃຫຍ່ ໃນ ສ.ປ.ປ ລາວ

ເປີດຕົວບໍລິການໃຫ່ມ ເຊົ່າສິນເຊື່ອ “ ຜ່ອນຊື້ຄຳ “



ໃນວັນທີ 07 ພະຈິກ 2022 ທີ່ຜ່ານມາ, ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ແລະ ຮ້ານຄຳພູວົງ ຜູ້ປະກອບການຮ້ານຄຳລາຍໃຫຍ່ ໃນ ສ.ປ.ປ ລາວ ໄດ້ມີການຈັດພິທີລົງນາມການຮ່ວມມື ທຸລະກິດໃຫ່ມ ເຊົ່າສິນເຊື່ອ “ຜ່ອນຊື້ຄຳ“

ໃນການລົງນາມໃນຄັ້ງນີ້ ແມ່ນລົງນາມໂດຍ: **ທ່ານ ທິຣະ ຊຸຕິວະລາພອນ** ປະທານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ແລະ **ທ່ານ ຈັນທະວົງ ພະມີສິດ** ຜູ້ອຳນວຍການ ຮ້ານ ຄຳພູວົງ.





ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຄັ້ງນີ້ ປະກອບມີ:**ທ່ານ ພູວຽງ ພົງສາ** ຫົວໜ້າກົມອຸດສາຫະກຳ ແລະ ການຄ້າ, **ທ່ານ ສຸພັກ ຖິ່ນໄຊພອນ** ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ, **ທ່ານ ພູວົງ ພະມີສິດ** ປະທານຮ້ານ ຄຳພູວົງ, ພ້ອມດ້ວຍແຂກຜູ້ມີກຽດຂອງທັງສອງຝ່າຍກໍ່ໄດ້ໃຫ້ກຽດເຂົ້າຮ່ວມພິທີນີ້ດ້ວຍ.

ໃນການຮ່ວມມືທາງທຸລະກິດເຊົ່າສິນເຊື່ອ “ຜ່ອນຊື້ຄຳ” ລະຫວ່າງ ມະຫະທຶນ ເຊົ່າສິນເຊື່ອ ແລະ ຮ້ານຄຳພູວົງ ໃນຄັ້ງນີ້ ຖືວ່າຈະເປັນການເພີ່ມຄວາມສາມາດໃນການເຂົ້າເຖິງສິນຊັບ “ຄຳ” ເຊິ່ງເປັນທີນິຍົມຂອງປະຊາຊົນໃນການສວມໃສ່ຄຳເປັນເຄື່ອງປະດັບ ແລະ ການສະສົມຄຳເພື່ອຄວາມໝັ້ນຄົງໃນອະນາຄົດ, ໂດຍຈະມີການນຳເອົາລະບົບອອນລາຍທີ່ຊ່ວຍໃຫ້ຂໍ້ມູນການປະເມີນສິນເຊື່ອຂອງລູກຄ້າຖືກຕ້ອງ ແລະ ໄວທີ່ສຸດ, ເຮັດໃຫ້ລູກຄ້າຮູ້ຜົນການພິຈາລະນາສິນເຊື່ອໄດ້ໄວພາຍໃນ 90 ນາທີ, ຈາກປະສົບການດຳເນີນງານດ້ານສິນເຊື່ອ ຜ່ອນຊື້ມາຢ່າງຍາວນານເຮັດໃຫ້ “ມະຫະທຶນ” ມີຄວາມພ້ອມໃນດ້ານການປະເມີນວົງເງິນສິນເຊື່ອໃຫ້ກັບລູກຄ້າໄດ້ທຸກກຸ່ມ ທັງກຸ່ມລູກຄ້າທີ່ມີລາຍໄດ້ປະຈຳ ແລະ ກຸ່ມອາຊີບອິດສະຫຼະຕ່າງໆ ໄດ້ຢ່າງທົ່ວເຖິງ ໂດຍສະເພາະກຸ່ມອາຊີບອິດສະຫຼະທີ່ຕ້ອງໄດ້ໃຊ້ຄວາມສາມາດ ແລະ ປະສົບການໃນການພິຈາລະນາສິນເຊື່ອໃຫ້ສອດຄ່ອງກັບຄວາມສ່ຽງຂອງລູກຄ້າໄດ້ຢ່າງທົ່ວເຖິງຫຼາຍທີ່ສຸດ ລວມທັງຈະມີການພິຈາລະນາປະເມີນຮ່ວມກັນລະຫວ່າງວົງເງິນສິນເຊື່ອ ແລະ ຄວາມສາມາດໃນການຜ່ອນຕໍ່ເດືອນ ໂດຍລູກຄ້າທີ່ຂໍຮັບສິນເຊື່ອຄຳ ຕ້ອງວາງເງິນຜ່ອນ 10-30% ຕາມຄຸນສົມບັດຂອງລູກຄ້າ, ໄລຍະເວລາໃນການຜ່ອນຄຳ ຕັ້ງແຕ່ 6-18 ເດືອນ ຕາມຂໍ້ມູນສິນເຊື່ອຂອງລູກຄ້າ ແລະ ໄລຍະເວລາໃນການຜ່ອນຄຳ ໂດຍລູກຄ້າສາມາດຮັບບໍລິການເຊົ່າສິນເຊື່ອໄດ້ ທີ່ຮ້ານ ຄຳພູວົງ ຍື່ນຂໍສິນເຊື່ອຜ່ານ ຮ້ານ ຄຳພູວົງ ທັ້ງ 4 ສາຂາ: ສາຂາຕະຫລາດເຊົ້າ 021 213546, ສາຂາຕະຫລາດວັງທອງ 021 265163, ສາຂາໄອເຕັກມໍ 030 5885999, ສາຂາວຽງຈັນເຊັນເຕີ 030 5222288 ຫຼື ຕິດຕໍ່ຜ່ານ ບໍລິສັດ ມະຫະທຶນ: ສຳນັກງານໃຫຍ່ບໍລິສັດມະຫະທຶນ (ນະຄອນຫຼວງວຽງຈັນ) ເບີໂທລະສັບ: 021 418 222